ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1233 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2023

# ຂໍ້ຕົກລົງ
## ວ່າດ້ວຍມາດຕະການປັບໃໝ
## ຕໍ່ຜູ້ລະເມີດລະບຽບການດຳເນີນກິດຈະການໂຮງງານ

- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1114/ກອຫ.ຄຣ, ລົງວັນທີ 03 ກໍລະກົດ 2023.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ຕໍ່ຜູ້ລະເມີດລະບຽບການດຳເນີນກິດຈະການໂຮງງານ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ໃນການນຳໃຊ້ມາດຕະການປັບໃໝຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການດຳເນີນກິດຈະການໂຮງງານ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ປະກອບສ່ວນເຂົ້າໃນການປົກປ້ອງສຸຂະພາບຂອງຜູ້ອອກແຮງງານ, ສິ່ງແວດລ້ອມ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ມາດຕະການປັບໃໝ**

ມາດຕະການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ກ່ຽວກັບການດຳເນີນກິດຈະການໂຮງງານ ຢູ່ ສປປ ລາວ ໂດຍອີງຕາມຂະໜາດຂອງໂຮງງານ.

**ມາດຕາ 3 ຫຼັກການ ກ່ຽວກັບການປັບໃໝ**

ການນຳໃຊ້ມາດຕະການປັບໃໝຕໍ່ຜູ້ລະເມີດລະບຽບການດຳເນີນກິດຈະການໂຮງງານ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຕ້ອງມີບົດບັນທຶກ ກ່ຽວກັບການປັບໃໝຕໍ່ຜູ້ລະເມີດລະບຽບການດຳເນີນກິດຈະການໂຮງງານ;
4. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານທຸກປະເພດ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການດຳເນີນກິດຈະການໂຮງງານ ຢູ່ ສປປ ລາວ.

## ໝວດທີ 2
## ພຶດຕິກຳການລະເມີດ ແລະ ອັດຕາການປັບໃໝ ຕໍ່ຜູ້ລະເມີດລະບຽບການດຳເນີນກິດຈະການໂຮງງານ

**ມາດຕາ 5 ພຶດຕິກຳການລະເມີດລະບຽບການດຳເນີນກິດຈະການໂຮງງານ**

ພຶດຕິກຳ ທີ່ເປັນການລະເມີດລະບຽບການດຳເນີນກິດຈະການໂຮງງານ ມີດັ່ງນີ້:

1. ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ, ດຳເນີນກິດຈະການໂຮງງານ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງຕັ້ງໂຮງງານບໍ່ຖືກຕາມສະຖານທີ່ກຳນົດ ຫຼື ຕັ້ງຢູ່ໃນເຂດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງຕັ້ງໂຮງງານແບບຄອບຄົວ ໂດຍບໍ່ມີໃບທະບຽນວິສາຫະກິດ (ສຳລັບກິດຈະການ ທີ່ຕ້ອງຂຶ້ນທະບຽນວິສາຫະກິດ);
4. ດຳເນີນກິດຈະການໂຮງງານແບບຄອບຄົວ ໂດຍບໍ່ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຊາບ;
5. ຕິດຕັ້ງເຄື່ອງຈັກເກີນຂະໜາດໂຮງງານ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ;
6. ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
7. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ;
8. ນຳວັດຖຸດິບ, ເຄື່ອງຈັກ, ອຸປະກອນ ຫຼື ແຮງງານຕ່າງປະເທດ ເຂົ້າມາໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
9. ນຳເຂົ້າ ຫຼື ນຳໃຊ້ ເຄມີອັນຕະລາຍຢູ່ໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
10. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ນຳໃຊ້ໜີບໃສ່ເຄື່ອງຈັກ ເພື່ອໃຫ້ຢຸດເຊົາການດຳເນີນກິດຈະການໂຮງງານ;
11. ກໍ່ສ້າງ, ດັດແກ້ ຫຼື ຕິດຕັ້ງເຄື່ອງຈັກ ລະບົບບຳບັດສິ່ງເສດເຫຼືອ ກ່ອນໄດ້ຮັບໃບຢັ້ງຢືນດ້ານເຕັກນິກກ່ຽວກັບລະບົບບຳບັດສິ່ງເສດເຫຼືອ;
12. ປ່ອຍມົນລະພິດ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານຕາມກົດໝາຍ ແລະ ລະບຽບການ;
13. ບໍ່ປະຕິບັດຕາມມາດຕະຖານເຕັກນິກໂຮງງານ;
14. ຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ກາຍມື້ໝົດອາຍຸ;
15. ນຳໃຊ້ໃບຢັ້ງຢືນດຳເນີນກິດຈະການໂຮງງານ ທີ່ໝົດອາຍຸ.

**ມາດຕາ 6 ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ, ດຳເນີນກິດຈະການໂຮງງານ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ ແລະ ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 5.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 10.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 15.000.000 ກີບ/ຄັ້ງ.

**ມາດຕາ 7 ສ້າງຕັ້ງໂຮງງານບໍ່ຖືກຕາມສະຖານທີ່ກຳນົດ ຫຼື ຕັ້ງຢູ່ໃນເຂດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ສ້າງຕັ້ງໂຮງງານບໍ່ຖືກຕາມສະຖານທີ່ກຳນົດ ຫຼື ຕັ້ງຢູ່ໃນເຂດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ, ໂຮງງານແບບຄອບຄົວ ຈະຖືກປັບໃໝ 5.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 10.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 15.000.000 ກີບ/ຄັ້ງ.

**ມາດຕາ 8 ສ້າງຕັ້ງໂຮງງານແບບຄອບຄົວ ໂດຍບໍ່ມີໃບທະບຽນວິສາຫະກິດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ສ້າງຕັ້ງໂຮງງານແບບຄອບຄົວ ໂດຍບໍ່ມີໃບທະບຽນວິສາຫະກິດ (ສຳລັບກິດຈະການທີ່ຕ້ອງຂຶ້ນທະບຽນວິສາຫະກິດ) ຈະຖືກປັບໃໝ 2.000.000 ກີບ/ຄັ້ງ.

**ມາດຕາ 9 ດຳເນີນກິດຈະການໂຮງງານແບບຄອບຄົວ ໂດຍບໍ່ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຜູ້ດຳເນີນກິດຈະການໂຮງງານ ທີ່ດຳເນີນກິດຈະການໂຮງງານແບບຄອບຄົວ ໂດຍບໍ່ແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຊາບ ຈະຖືກປັບໃໝ 1.000.000 ກີບ/ຄັ້ງ.

**ມາດຕາ 10 ຕິດຕັ້ງເຄື່ອງຈັກເກີນຂະໜາດໂຮງງານ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ຕິດຕັ້ງເຄື່ອງຈັກເກີນຂະໜາດໂຮງງານ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ, ໂຮງງານແບບຄອບຄົວ ຈະຖືກປັບໃໝ 2.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 4.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 6.000.000 ກີບ/ຄັ້ງ.

**ມາດຕາ 11 ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 1.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 2.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 3.000.000 ກີບ/ຄັ້ງ.

**ມາດຕາ 12 ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ທີ່ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 3.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 6.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 9.000.000 ກີບ/ຄັ້ງ.

**ມາດຕາ 13 ນຳວັດຖຸດິບ, ເຄື່ອງຈັກ, ອຸປະກອນ ຫຼື ແຮງງານຕ່າງປະເທດ ເຂົ້າມາໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ນຳວັດຖຸດິບ, ເຄື່ອງຈັກ, ອຸປະກອນ ຫຼື ແຮງງານຕ່າງປະເທດ ເຂົ້າມາໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກຍຶດວັດຖຸດິບ, ເຄື່ອງຈັກ ແລະ ອຸປະກອນ ພ້ອມທັງປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 2.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 4.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 6.000.000 ກີບ/ຄັ້ງ.

**ມາດຕາ 14 ນຳເຂົ້າ ຫຼື ນຳໃຊ້ ເຄມີອັນຕະລາຍຢູ່ໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ດຳເນີນກິດຈະການໂຮງງານ ທີ່ນຳເຂົ້າ ຫຼື ນຳໃຊ້ ເຄມີອັນຕະລາຍ ຢູ່ໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກຍຶດເຄມີອັນຕະລາຍ ພ້ອມທັງປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 5.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 10.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 15.000.000 ກີບ/ຄັ້ງ.

**ມາດຕາ 15 ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ນຳໃຊ້ໜີບໃສ່ເຄື່ອງຈັກ ເພື່ອໃຫ້ຢຸດເຊົາການດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ທີ່ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ນຳໃຊ້ໜີບໃສ່ເຄື່ອງຈັກ ເພື່ອໃຫ້ຢຸດເຊົາການດຳເນີນກິດຈະການໂຮງງານ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 2.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 4.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 6.000.000 ກີບ/ຄັ້ງ.

**ມາດຕາ 16 ກໍ່ສ້າງ, ດັດແກ້ ຫຼື ຕິດຕັ້ງເຄື່ອງຈັກ ລະບົບບຳບັດສິ່ງເສດເຫຼືອ ກ່ອນໄດ້ຮັບໃບຢັ້ງຢືນດ້ານເຕັກນິກກ່ຽວກັບລະບົບບຳບັດສິ່ງເສດເຫຼືອ**

ຜູ້ດຳເນີນກິດຈະການໂຮງງານ ທີ່ກໍ່ສ້າງ, ດັດແກ້ ຫຼື ຕິດຕັ້ງເຄື່ອງຈັກ ລະບົບບຳບັດສິ່ງເສດເຫຼືອກ່ອນໄດ້ຮັບໃບຢັ້ງຢືນດ້ານເຕັກນິກກ່ຽວກັບລະບົບບຳບັດສິ່ງເສດເຫຼືອ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 3.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 5.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 7.000.000 ກີບ/ຄັ້ງ.

**ມາດຕາ 17 ປ່ອຍມົນລະພິດ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ຕາມກົດໝາຍ ແລະ ລະບຽບການ**

ຜູ້ດຳເນີນກິດຈະການໂຮງງານ ທີ່ປ່ອຍມົນລະພິດ ຫຼື ຖິ້ມສິ່ງເສດເຫຼືອຂອງໂຮງງານ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານຕາມກົດໝາຍ ແລະ ລະບຽບການ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ, ໂຮງງານແບບຄອບຄົວ ຈະຖືກປັບໃໝ 10.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 15.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 20.000.000 ກີບ/ຄັ້ງ.

**ມາດຕາ 18 ບໍ່ປະຕິບັດຕາມມາດຕະຖານເຕັກນິກໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ທີ່ບໍ່ປະຕິບັດຕາມມາດຕະຖານເຕັກນິກໂຮງງານ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ, ໂຮງງານແບບຄອບຄົວ ຈະຖືກປັບໃໝ 3.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 5.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 7.000.000 ກີບ/ຄັ້ງ.

**ມາດຕາ 19 ຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ກາຍມື້ໝົດອາຍຸ**

ຜູ້ດຳເນີນກິດຈະການໂຮງງານ ທີ່ຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ກາຍມື້ໝົດອາຍຸ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 1.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 2.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 3.000.000 ກີບ/ຄັ້ງ.

**ມາດຕາ 20 ນຳໃຊ້ໃບຢັ້ງຢືນດຳເນີນກິດຈະການໂຮງງານ ທີ່ໝົດອາຍຸ**

ຜູ້ດຳເນີນກິດຈະການໂຮງງານ ທີ່ນຳໃຊ້ໃບຢັ້ງຢືນດຳເນີນກິດຈະການໂຮງງານທີ່ໝົດອາຍຸ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ຈະຖືກປັບໃໝ 5.000.000 ກີບ/ຄັ້ງ;
2. ໂຮງງານຂະໜາດກາງ ຈະຖືກປັບໃໝ 10.000.000 ກີບ/ຄັ້ງ;
3. ໂຮງງານຂະໜາດໃຫຍ່ ຈະຖືກປັບໃໝ 15.000.000 ກີບ/ຄັ້ງ.

**ມາດຕາ 21 ການປັບໃໝເພີ່ມ**

ຜູ້ດຳເນີນກິດຈະການໂຮງງານ ຫາກມີພຶດຕິກຳທີ່ເປັນການລະເມີດລະບຽບການດຳເນີນກິດຈະການໂຮງງານເປັນຄັ້ງທີສອງ ແລະ ຄັ້ງທີສາມ ໃຫ້ປັບໃໝເພີ່ມຕາມແຕ່ລະກໍລະນີ ທີ່ກຳນົດໄວ້ໃນມາດຕາ 6, 7, 8, 9, 10, 11, 12, 13, 14, 15, 16, 17, 18, 19 ແລະ 20 ດັ່ງນີ້:

1. ລະເມີດຄັ້ງທີສອງ ຈະຖືກປັບໃໝ ສອງ ເທົ່າ;

2. ລະເມີດຄັ້ງທີສາມ ຈະຖືກປັບໃໝ ຫ້າ ເທົ່າ ພ້ອມທັງຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານ ຫຼື ໃຫ້ຢຸດເຊົາດຳເນີນກິດຈະການໂຮງງານ ສຳລັບໂຮງງານແບບຄອບຄົວ.

## ໝວດທີ 3
## ການນຳໃຊ້ເງິນຈາກການປັບໃໝ

**ມາດຕາ 22 ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕາມຂໍ້ຕົກລົງສະບັບນີ້ 60% ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ 40% ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້. ສຳລັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 23 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ທີ່ຈັດເປັນ ລາຍຮັບ-ລາຍຈ່າຍ ວິຊາການ ນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານກ່ຽວກັບການຄຸ້ມຄອງໂຮງງານ ລວມທັງວຽກງານທີ່ຈຳເປັນ ແລະ ຮີບດ່ວນ;
2. ການສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບການຄຸ້ມຄອງໂຮງງານ;
3. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່;
4. ການເກັບຮັກສາ ຫຼື ທຳລາຍວັດຖຸດິບ, ເຄື່ອງຈັກ ແລະ ອຸປະກອນ ທີ່ຖືກຍຶດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ມະໄລທອງ ກົມມະສິດ